ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ເລກທີ 0464 /ອຄ.ກນຄຕ
ນະຄອນຫຼວງວຽງຈັນ, ວັນທີ 12 MAY 2020

**ຄຳແນະນຳ**
**ກ່ຽວກັບ ການຈັດຕັ້ງປະຕິບັດ ມາດຕາ 10, 11 ແລະ 18**
**ຂອງກົດໝາຍວ່າດ້ວຍການຕອບໂຕ້ ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ສະບັບເລກທີ 65/ສພຊ, ລົງວັນທີ 14 ມິຖຸນາ 2019**

- ອີງຕາມ ກົດໝາຍວ່າດ້ວຍ ການຕອບໂຕ້ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ສະບັບເລກທີ 65/ສພຊ, ລົງວັນທີ 14 ມິຖຸນາ 2019;
- ອີງຕາມ ດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງ ກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງຕາມ ໜັງສືສະເໜີຂອງກົມນະໂຍບາຍການຄ້າຕ່າງປະເທດ ສະບັບເລກທີ 0014/ກນຄຕ.ຫຼຝ, ລົງວັນທີ 10 ມັງກອນ 2020;

ເພື່ອຜັນຂະຫຍາຍເນື້ອໃນ ມາດຕາ 10, 11 ແລະ 18 ຂອງກົດໝາຍວ່າດ້ວຍການຕອບໂຕ້ການທຸ່ມຕະຫຼາດ ແລະ ການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ສະບັບເລກທີ 65/ສພຊ, ລົງວັນທີ 14 ມິຖຸນາ 2019 ໃຫ້ເປັນອັນລະອຽດ, ແທດເໝາະກັບສະພາບຕົວຈິງ ໃນແຕ່ລະໄລຍະ ແລະ ຮັບປະກັນຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນສູງ.

**ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກຄຳແນະນຳ:**

## I. ການກຳນົດລາຄາປົກກະຕິ

ການກຳນົດລາຄາປົກກະຕິ ໃນກໍລະນີບໍ່ມີການຈຳໜ່າຍສິນຄ້າທີ່ຄ້າຍຄືກັນໃນຕະຫຼາດພາຍໃນຂອງປະເທດຜູ້ສົ່ງອອກ ຫຼື ການຈຳໜ່າຍສິນຄ້າດັ່ງກ່າວບໍ່ສາມາດນຳມາປຽບທຽບໄດ້ ເນື່ອງຈາກຕະຫຼາດໃນປະເທດຜູ້ສົ່ງອອກມີລັກສະນະສະເພາະ ຫຼື ມີການຈຳໜ່າຍສິນຄ້າໃນປະລິມານທີ່ໜ້ອຍກວ່າ ຫ້າສ່ວນຮ້ອຍ ຂອງປະລິມານສິນຄ້າທີ່ສົ່ງເຂົ້າມາຈຳໜ່າຍຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໃນມາດຕາ 10 ຂອງກົດໝາຍ ໃຫ້ກຳນົດດັ່ງນີ້:

**1. ລາຄາສົ່ງອອກສິນຄ້າທີ່ຄ້າຍຄືກັນໄປຍັງປະເທດທີສາມທີ່ມີການນຳເຂົ້າສິນຄ້າທີ່ຖືກພິຈາລະນາ ຖ້າມີເຫດຜົນທີ່ເຊື່ອໄດ້ວ່າ ລາຄານັ້ນສະແດງເຖິງລາຄາໃນຕະຫຼາດປະເທດຜູ້ສົ່ງອອກ**

ໃຫ້ພິຈາລະນາຈາກປະລິມານການສົ່ງອອກສິນຄ້າຂອງປະເທດຜູ້ສົ່ງອອກໄປຍັງປະເທດທີສາມນັ້ນ ຫຼາຍກວ່າ ປະລິມານການສົ່ງອອກໄປຍັງປະເທດອື່ນ ຊຶ່ງສິນຄ້າທີ່ສົ່ງອອກໄປຍັງປະເທດດັ່ງກ່າວ ຕ້ອງເປັນສິນຄ້າທີ່ຄ້າຍຄື

ກັນກັບສິນຄ້າທີ່ສົ່ງອອກມາຍັງ ສປປ ລາວ; ຫຼື ຄະນະສືບຫາຂໍ້ມູນ ສາມາດພິຈາລະນາປັດໄຈອື່ນເພີ່ມຕື່ມ ທີ່ເຫັນວ່າ ເໝາະສົມ.

**2. ລາຄາຄິດໄລ່ຈາກຕົ້ນທຶນການຜະລິດຂອງປະເທດແຫຼ່ງກໍາເນີດສິນຄ້າ ບວກກັບຄ່າໃຊ້ຈ່າຍ ໃນການບໍລິຫານ, ການຈໍາໜ່າຍ ແລະ ຄ່າໃຊ້ຈ່າຍອື່ນ ລວມທັງກໍາໄລທີ່ເກີດຂຶ້ນ**

ລາຄາຕ້ອງຖືກຄິດໄລ່ບົນພື້ນຖານຂໍ້ມູນການບັນທຶກບັນຊີຂອງ ຜູ້ສົ່ງອອກ ຫຼື ຜູ້ຜະລິດສິນຄ້າທີ່ຖືກພິຈາລະນາ ໃນໄລຍະການສືບຫາຂໍ້ມູນ ຊຶ່ງການບັນທຶກບັນຊີດັ່ງກ່າວ ຕ້ອງສອດຄ່ອງກັບຫຼັກການບັນຊີທີ່ເປັນທີ່ຍອມຮັບທົ່ວໄປໃນປະເທດຜູ້ສົ່ງອອກ ແລະ ສະທ້ອນເຖິງຕົ້ນທຶນທີ່ຕິດພັນກັບການຜະລິດ ແລະ ຈໍາໜ່າຍ ຢ່າງສົມເຫດສົມຜົນ.

## II. ສູດຄິດໄລ່ອັດຕາການທຸ່ມຕະຫຼາດ

ການກໍານົດອັດຕາການທຸ່ມຕະຫຼາດ ຕາມທີ່ໄດ້ກໍານົດໃນມາດຕາ 11 ຂອງກົດໝາຍ ມີສູດຄິດໄລ່ລະອຽດດັ່ງນີ້:

**1. ສູດຄິດໄລ່ອັດຕາການທຸ່ມຕະຫຼາດ**

**ອັດຕາການທຸ່ມຕະຫຼາດ = (ສ່ວນຕ່າງ ÷ ລາຄາສົ່ງອອກ) x 100**

**2. ສູດຄິດໄລ່ສ່ວນຕ່າງ**

ການຄິດໄລ່ ເພື່ອຊອກຫາສ່ວນຕ່າງ ລະຫວ່າງ ລາຄາປົກກະຕິ ກັບ ລາຄາສົ່ງອອກ ທີ່ດໍາເນີນການຄ້າໃນລະດັບ ແລະ ໄລຍະເວລາດຽວກັນ ມີ ສາມ ວິທີການປຽບທຽບ ດັ່ງນີ້:

**1) ການປຽບທຽບ ລະຫວ່າງ ລາຄາປົກກະຕິສະເລ່ຍຖ່ວງນໍ້າໜັກ ກັບ ລາຄາສົ່ງອອກສະເລ່ຍຖ່ວງນໍ້າໜັກ**

ໃຫ້ເອົາ ລາຄາປົກກະຕິສະເລ່ຍຖ່ວງນໍ້າໜັກ ປຽບທຽບກັບ ລາຄາສົ່ງອອກສະເລ່ຍຖ່ວງນໍ້າໜັກ ຊຶ່ງເປັນລາຄາ ສະເລ່ຍຂອງ ປະລິມານ ແລະ ຈໍານວນຄັ້ງ ຂອງການຈໍາໜ່າຍ ຫຼື ສົ່ງອອກສິນຄ້າທີ່ຖືກພິຈາລະນາ ເນື່ອງຈາກການຈໍາໜ່າຍ ຫຼື ສົ່ງອອກສິນຄ້າແຕ່ລະຄັ້ງມີປະລິມານຕ່າງໆກັນ ແລະ ປະລິມານທີ່ຕ່າງກັນນັ້ນ ມີຜົນເຮັດໃຫ້ລາຄາປົກກະຕິ ຫຼື ລາຄາການສົ່ງອອກ ແຕ່ລະຄັ້ງບໍ່ເທົ່າກັນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ສ່ວນຕ່າງ = ລາຄາປົກກະຕິສະເລ່ຍຖ່ວງນໍ້າໜັກ - ລາຄາສົ່ງອອກສະເລ່ຍຖ່ວງນໍ້າໜັກ**

ການຄິດໄລ່ລາຄາປົກກະຕິສະເລ່ຍຖ່ວງນໍ້າໜັກ ແມ່ນໃຫ້ ຄູນແຕ່ລະລາຄາດ້ວຍປະລິມານຖ່ວງນໍ້າໜັກ, ບວກລາຄາທີ່ມີການຖ່ວງນໍ້າໜັກເຂົ້າກັນ ແລະ ຫານໃຫ້ປະລິມານທັງໝົດ ດັ່ງນີ້:

**ລາຄາສະເລ່ຍແບບຖ່ວງນໍ້າໜັກ = [(ລາຄາ 1 × ປະລິມານ 1) + (ລາຄາ 2 × ປະລິມານ 2) + (ລາຄາ 3 × ປະລິມານ 3)] ÷ [(ປະລິມານ 1 + ປະລິມານ 2 + ປະລິມານ 3)]**

**2) ການປຽບທຽບ ລະຫວ່າງ ລາຄາປົກກະຕິ ກັບ ລາຄາສົ່ງອອກຂອງການເຮັດທຸລະກໍາທາງການຄ້າແຕ່ລະຄັ້ງ**

ໃຫ້ເອົາ ລາຄາປົກກະຕິ ໃນແຕ່ລະຄັ້ງທີ່ມີການເຮັດທຸລະກໍາການຈໍາໜ່າຍພາຍໃນປະເທດຜູ້ສົ່ງອອກ ປຽບ ທຽບກັບ ລາຄາສົ່ງອອກ ໃນແຕ່ລະຄັ້ງທີ່ມີການເຮັດທຸລະກໍາການສົ່ງອອກ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ສ່ວນຕ່າງ = ລາຄາປົກກະຕິຂອງການເຮັດທຸລະກໍາແຕ່ລະລາຍການ - ລາຄາສົ່ງອອກຂອງການເຮັດທຸລະກໍາແຕ່ລະລາຍການ**

3) ການປຽບທຽບ ລະຫວ່າງ ລາຄາປົກກະຕິສະເລ່ຍຖ່ວງນໍ້າໜັກ ກັບ ລາຄາສົ່ງອອກຂອງການເຮັດທຸລະກໍາທາງການຄ້າແຕ່ລະຄັ້ງ

ໃຫ້ປຽບທຽບ ໃນກໍລະນີທີ່ລາຄາສົ່ງອອກມີຄວາມແຕກຕ່າງກັນ ລະຫວ່າງ ຜູ້ຊື້, ຂົງເຂດ ຫຼື ໄລຍະເວລາ ທີ່ສົ່ງອອກ ຊຶ່ງໃຫ້ເອົາ ລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ ປຽບທຽບກັບ ລາຄາສົ່ງອອກໃນແຕ່ລະຄັ້ງທີ່ມີການ ເຮັດທຸລະກຳການສົ່ງອອກ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ສ່ວນຕ່າງ = ລາຄາປົກກະຕິສະເລ່ຍຖ່ວງນ້ຳໜັກ - ລາຄາສົ່ງອອກຂອງການເຮັດທຸລະກຳແຕ່ລະລາຍການ**

**III. ວິທີການການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍ**

ການກຳນົດຄວາມເສຍຫາຍຢ່າງຫຼວງຫຼາຍຕໍ່ຜູ້ຜະລິດສິນຄ້າພາຍໃນຈາກ ການທຸ່ມຕະຫຼາດ ຫຼື ການຊ່ວຍໜູນ ຂອງປະເທດຜູ້ສົ່ງອອກ ແມ່ນໃຫ້ພິຈາລະນາຈາກຂໍ້ມູນປ່ຽນແປງທີ່ຊັດເຈນ ແລະ ຢ່າງຕໍ່ເນື່ອງຂອງ ສາມ ຂໍ້ມູນຫຼັກ ຖານ ດັ່ງທີ່ໄດ້ກຳນົດໃນມາດຕາ 18 ຂອງກົດໝາຍ ທຽບກັບ ຂໍ້ມູນຍ້ອນຫຼັງ ບໍ່ເກີນ ຫ້າ ປີ ໂດຍປະຕິບັດ ດັ່ງນີ້:

**1. ປະລິມານການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ເພີ່ມຂຶ້ນ ແບບເດັດຖານ ຫຼື ທຽບຖານ ເມື່ອທຽບໃສ່ການຜະລິດ ຫຼື ການບໍລິໂພກພາຍໃນ ສປປ ລາວ**

ໃຫ້ພິຈາລະນາຈາກຫຼັກຖານ ແລະ ຂໍ້ມູນການປ່ຽນແປງຂອງການນຳເຂົ້າສິນຄ້ານັ້ນວ່າ ມີປະລິມານການນຳ ເຂົ້າທີ່ເພີ່ມຂຶ້ນຢ່າງຊັດເຈນ ຫຼື ມີການປ່ຽນແປງປະລິມານການນຳເຂົ້າໃນສັດສ່ວນທີ່ເພີ່ມຂຶ້ນ ເມື່ອປຽບທຽບກັບ ປະລິມານການຜະລິດຂອງຜູ້ຜະລິດສິນຄ້າ ຫຼື ການບໍລິໂພກ ພາຍໃນ ສປປ ລາວ.

ຫາກຜົນຂອງການພິຈາລະນາ ຕົກຢູ່ໃນກໍລະນີໃດໜຶ່ງດັ່ງລຸ່ມນີ້ ແມ່ນບໍ່ໃຫ້ຖືວ່າເປັນຄວາມເສຍຫາຍຢ່າງ ຫຼວງຫຼາຍ ແລະ ຄະນະສືບຫາຂໍ້ມູນ ຕ້ອງຍົກເລີກການດຳເນີນການສືບຫາຂໍ້ມູນ:

1) ປະລິມານການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ໜ້ອຍກວ່າ ສາມສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ ຄ້າຍຄືກັນເຂົ້າມາໃນ ສປປ ລາວ;

2) ປະລິມານການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດຈາກແຕ່ລະປະເທດລວມກັນ ໜ້ອຍກວ່າ ເຈັດສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ;

3) ປະລິມານການນຳເຂົ້າສິນຄ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ທີ່ມີແຫຼ່ງກຳເນີດຈາກປະເທດ ກຳລັງພັດທະນາທີ່ເປັນສະມາຊິກຂອງອົງການການຄ້າໂລກ ໜ້ອຍກວ່າ ສີ່ສ່ວນຮ້ອຍ ຂອງການນຳເຂົ້າສິນຄ້າທີ່ຄ້າຍຄື ກັນ;

4) ປະລິມານຂອງສິນຄ້ານຳເຂົ້າທີ່ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຈາກແຕ່ລະປະເທດ ລວມກັນ ໜ້ອຍກວ່າ ເກົ້າສ່ວນຮ້ອຍ ຂອງປະລິມານການນຳເຂົ້າສິນຄ້າທີ່ຄ້າຍຄືກັນທັງໝົດ.

**2. ຜົນກະທົບຂອງສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຕໍ່ລາຄາສິນຄ້າ ທີ່ຄ້າຍຄືກັນ ໃນ ສປປ ລາວ ຊຶ່ງເຮັດໃຫ້ຜູ້ຜະລິດພາຍໃນ ຕ້ອງຫຼຸດລາຄາ, ຖືກກົດລາຄາ ຫຼື ຈຳໜ່າຍສິນຄ້າໃນລາຄາ ຂາດທຶນ**

1) **ການຫຼຸດລາຄາ** ແມ່ນໃຫ້ປຽບທຽບ ລະຫວ່າງ ລາຄານຳເຂົ້າຂອງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການ ຊ່ວຍໜູນຂອງປະເທດຜູ້ສົ່ງອອກ ກັບ ລາຄາຈຳໜ່າຍສິນຄ້າທີ່ຄ້າຍຄືກັນຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງຕ້ອງເປັນ ລາຄາໃນລະດັບການຄ້າດຽວກັນ. ລາຄາໃນລະດັບການຄ້າດຽວກັນ ມີຄວາມໝາຍຄືດັ່ງສອງຕົວຢ່າງຂ້າງລຸ່ມນີ້:

<u>ຕົວຢ່າງ 1</u>: ຖ້າເອົາລາຄານຳເຂົ້າຂອງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງ ອອກ ຊຶ່ງກຳນົດເປັນລາຄາໜ້າໂຮງງານ ກໍຕ້ອງເອົາມາສົມທຽບກັບ ລາຄາໜ້າໂຮງງານຂອງຜູ້ຜະລິດສິນຄ້າພາຍໃນ ເຊັ່ນກັນ.

<u>ຕົວຢ່າງ 2</u>: ຖ້າເອົາລາຄານຳເຂົ້າຂອງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງ ອອກ ຊຶ່ງກຳນົດເປັນລາຄາທີ່ລວມຄ່າຂົນສົ່ງ ແລະ ປະກັນໄພ ກໍຕ້ອງເອົາມາສົມທຽບກັບ ລາຄາທີ່ລວມຄ່າຂົນສົ່ງ

ແລະ ປະກັນໄພຂອງຜູ້ຜະລິດສິນຄ້າພາຍໃນ ເຊັ່ນກັນ ຊຶ່ງບໍ່ສາມາດເອົາລາຄາໜ້າໂຮງງານ ມາສົມທຽບກັບລາຄາທີ່ລວມປະກັນໄພ ແລະ ຄ່າຂົນສົ່ງໄດ້.

2) **ການຖືກກົດລາຄາ** ແມ່ນໃຫ້ພິຈາລະນາວ່າ ລາຄາສິນຄ້າທີ່ຄ້າຍຄືກັນຂອງຜູ້ຜະລິດສິນຄ້າພາຍໃນປະເທດ ມີທ່າອ່ຽງຫຼຸດລົງ ເພື່ອໃຫ້ສາມາດແຂ່ງຂັນກັບ ສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ.

3) **ການຈຳໜ່າຍສິນຄ້າໃນລາຄາຂາດທຶນ** ແມ່ນໃຫ້ພິຈາລະນາວ່າ ການນຳເຂົ້າສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ເຮັດໃຫ້ລາຄາສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນປະເທດບໍ່ສາມາດເພີ່ມສູງຂຶ້ນ ຫຼື ເມື່ອປຽບທຽບກັບຕົ້ນທຶນຂອງຜູ້ຜະລິດສິນຄ້າພາຍໃນ ເຫັນວ່າມີການຈຳໜ່າຍຕ່ຳກວ່າຕົ້ນທຶນ ຫຼື ບໍ່ສາມາດຈຳໜ່າຍໄດ້ໃນລາຄາທີ່ສູງຂຶ້ນ ຕາມອັດຕາການເພີ່ມຂຶ້ນຂອງຕົ້ນທຶນ.

**3. ຜົນກະທົບຂອງສິນຄ້າຈາກການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ທີ່ມີຕໍ່ຜູ້ຜະລິດສິນຄ້າພາຍໃນ**

ໃຫ້ພິຈາລະນາຈາກ ຜົນກະທົບຕົວຈິງ ຫຼື ທ່າອ່ຽງທີ່ມີຜົນກະທົບທາງລົບຕໍ່ປັດໄຈດັ່ງຕໍ່ໄປນີ້ ຊຶ່ງຕ້ອງພິຈາລະນາຜົນກະທົບໃນພາບລວມ ດັ່ງນີ້:

1) **ຜົນກະທົບຕໍ່ຍອດຈຳໜ່າຍ** ໃຫ້ພິຈາລະນາຈາກການຫຼຸດລົງຂອງປະລິມານ ຫຼື ມູນຄ່າການຈຳໜ່າຍສິນຄ້າທີ່ຄ້າຍຄືກັນ ທີ່ຜະລິດພາຍໃນປະເທດ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ຍອດຈຳໜ່າຍ = [(ປະລິມານ ຫຼື ມູນຄ່າການຈຳໜ່າຍສິນຄ້າຂອງປີທີ່ດຳເນີນການສືບສວນ - ປະລິມານ ຫຼື ມູນຄ່າການຈຳໜ່າຍສິນຄ້າຂອງປີຜ່ານມາ) ÷ (ປະລິມານ ຫຼື ມູນຄ່າການຈຳໜ່າຍສິນຄ້າຂອງປີຜ່ານມາ)] x 100**

ວິທີຄິດໄລ່ປະລິມານ ຫຼື ມູນຄ່າການຈຳໜ່າຍສິນຄ້າ ມີດັ່ງນີ້:

**ປະລິມານການຈຳໜ່າຍສິນຄ້າ = ປະລິມານສິນຄ້າທີ່ຜະລິດໄດ້ - ສິນຄ້າທີ່ຍັງເຫຼືອ**

**ມູນຄ່າການຈຳໜ່າຍສິນຄ້າ = ປະລິມານສິນຄ້າທີ່ຈຳໜ່າຍໄດ້ x ລາຄາສິນຄ້າຕໍ່ໜ່ວຍ**

2) **ຜົນກະທົບຕໍ່ກຳໄລ** ໃຫ້ພິຈາລະນາຈາກການຫຼຸດລົງຂອງຜົນກຳໄລຈາກການຜະລິດ ແລະ ຈຳໜ່າຍສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ກຳໄລ = [(ຜົນກຳໄລຂອງປີທີ່ດຳເນີນການສືບສວນ - ຜົນກຳໄລຂອງປີຜ່ານມາ) ÷ (ຜົນກຳໄລຂອງປີຜ່ານມາ)] x 100**

ວິທີຄິດໄລ່ຜົນກຳໄລ ຫຼື ຂາດທຶນ ມີດັ່ງນີ້:

**ຜົນກຳໄລ = [(ມູນຄ່າການຈຳໜ່າຍສິນຄ້າ) - (ຕົ້ນທຶນການຜະລິດ + ຄ່າໃຊ້ຈ່າຍໃນການບໍລິຫານ)]**

3) **ຜົນກະທົບຕໍ່ຜົນຜະລິດ** ໃຫ້ພິຈາລະນາຈາກການຫຼຸດລົງຂອງປະລິມານການຜະລິດສິນຄ້າທີ່ຄ້າຍຄືກັນ ທີ່ຜະລິດພາຍໃນປະເທດ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ຜົນຜະລິດ = [(ຜົນຜະລິດສິນຄ້າຂອງປີທີ່ດຳເນີນການສືບສວນ - ຜົນຜະລິດສິນຄ້າຂອງປີຜ່ານມາ) ÷ (ຜົນຜະລິດສິນຄ້າຂອງປີຜ່ານມາ)] x 100**

4) **ຜົນກະທົບຕໍ່ສ່ວນແບ່ງຕະຫຼາດ** ໃຫ້ພິຈາລະນາຈາກສ່ວນແບ່ງຕະຫຼາດຂອງຜູ້ຜະລິດສິນຄ້າພາຍໃນທີ່ຫຼຸດລົງ ເນື່ອງຈາກການປ່ຽນແປງອັດຕາສ່ວນແບ່ງຕະຫຼາດທີ່ເພີ່ມຂຶ້ນຂອງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການ

ຊ່ວຍໜູນຂອງປະເທດຜູ້ສົ່ງອອກທີ່ມີຕໍ່ຕະຫຼາດສິນຄ້າທັງໝົດພາຍໃນປະເທດ ເມື່ອປຽບທຽບກັບອັດຕາສ່ວນແບ່ງຕະຫຼາດປີຜ່ານມາ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ສ່ວນແບ່ງຕະຫຼາດ = ອັດຕາສ່ວນແບ່ງຕະຫຼາດຂອງປີທີ່ດຳເນີນການສືບສວນ - ອັດຕາສ່ວນແບ່ງຕະຫຼາດຂອງປີຜ່ານມາ**

ວິທີຄິດໄລ່ອັດຕາສ່ວນແບ່ງຕະຫຼາດ ມີດັ່ງນີ້:

**ອັດຕາສ່ວນແບ່ງຕະຫຼາດ = (ມູນຄ່າການຈຳໜ່າຍສິນຄ້ານຳເຂົ້າ ÷ ມູນຄ່າການຈຳໜ່າຍສິນຄ້າທັງໝົດພາຍໃນປະເທດ) x 100**

5) **ຜົນກະທົບຕໍ່ຜະລິດຕະພາບ** ໃຫ້ພິຈາລະນາຈາກການຫຼຸດລົງຂອງປະສິດທິພາບໃນການຜະລິດສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ຜະລິດຕະພາບ = [(ຜະລິດຕະພາບຂອງປີທີ່ດຳເນີນການສືບສວນ - ຜະລິດຕະພາບຂອງປີຜ່ານມາ) ÷ (ຜະລິດຕະພາບຂອງປີຜ່ານມາ)] x 100**

ວິທີຄິດໄລ່ຜະລິດຕະພາບ ມີດັ່ງນີ້:

**ຜະລິດຕະພາບ = ຜົນຜະລິດທັງໝົດ ÷ ປັດໄຈການຜະລິດ**

ສຳລັບປັດໄຈການຜະລິດ ປະກອບມີ ວັດສະດຸ, ແຮງງານ ແລະ ຄ່າໃຊ້ຈ່າຍອື່ນໆທີ່ປະກອບເຂົ້າໃນຂະບວນການຜະລິດສິນຄ້າ.

6) **ຜົນກະທົບຕໍ່ຜົນຕອບແທນຈາກການລົງທຶນ** ໃຫ້ພິຈາລະນາຈາກການຫຼຸດລົງຂອງອັດຕາຜົນຕອບແທນຂອງຜູ້ຜະລິດທີ່ໄດ້ຮັບຈາກການລົງທຶນໃນການຜະລິດ ແລະ ຈຳໜ່າຍສິນຄ້າທີ່ຄ້າຍຄືກັນຂອງຜູ້ຜະລິດສິນຄ້າພາຍໃນ ເມື່ອປຽບທຽບກັບ ອັດຕາຜົນຕອບແທນຂອງປີຜ່ານມາ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ຜົນຕອບແທນຈາກການລົງທຶນ = ອັດຕາຜົນຕອບແທນຈາກການລົງທຶນຂອງປີທີ່ດຳເນີນການສືບສວນ - ອັດຕາຜົນຕອບແທນຈາກການລົງທຶນຂອງປີຜ່ານມາ**

ວິທີຄິດໄລ່ ແລະ ອັດຕາຜົນຕອບແທນຈາກການລົງທຶນ ມີດັ່ງນີ້:

**ອັດຕາຜົນຕອບແທນຈາກການລົງທຶນ = [(ລາຍຮັບຈາກການລົງທຶນ - ລາຍຈ່າຍທີ່ໃຊ້ໃນການລົງທຶນ) ÷ (ລາຍຈ່າຍທີ່ໃຊ້ໃນການລົງທຶນ)] x 100**

7) **ຜົນກະທົບຕໍ່ກຳລັງການຜະລິດ** ໃຫ້ພິຈາລະນາຈາກການຫຼຸດລົງຂອງອັດຕາການນຳໃຊ້ກຳລັງການຜະລິດສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນ ເມື່ອປຽບທຽບກັບອັດຕາການນຳໃຊ້ກຳລັງການຜະລິດຂອງປີຜ່ານມາ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ກຳລັງການຜະລິດ = ອັດຕາການນຳໃຊ້ກຳລັງການຜະລິດຂອງປີທີ່ດຳເນີນການສືບສວນ - ອັດຕາການນຳໃຊ້ກຳລັງການຜະລິດຂອງປີຜ່ານມາ**

ວິທີຄິດໄລ່ອັດຕາການນຳໃຊ້ກຳລັງການຜະລິດ ມີດັ່ງນີ້:

ອັດຕາການນຳໃຊ້ກຳລັງການຜະລິດ = (ຜົນຜະລິດຕົວຈິງ ÷ ຄວາມອາດສາມາດຜົນຜະລິດສູງສຸດ) x 100

ວິທີຄິດໄລ່ຄວາມອາດສາມາດຜົນຜະລິດສູງສຸດ ມີດັ່ງນີ້:

**ຄວາມອາດສາມາດຜົນຜະລິດສູງສຸດ = ຊົ່ວໂມງເຮັດວຽກຂອງເຄື່ອງຈັກ ÷ ເວລາຕົວຈິງທີ່ໃຊ້ເຂົ້າໃນການຜະລິດສິນຄ້າໜຶ່ງຫົວໜ່ວຍ**

**8) ປັດໄຈທີ່ມີຜົນກະທົບຕໍ່ລາຄາພາຍໃນປະເທດ** ໃຫ້ພິຈາລະນາຈາກການຫຼຸດລົງຂອງລາຄາຈຳໜ່າຍສິນຄ້າທີ່ຄ້າຍຄືກັນພາຍໃນປະເທດ ຈາກລາຄາຂອງສິນຄ້າທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ທີ່ສົ່ງເຂົ້າມາຈຳໜ່າຍພາຍໃນປະເທດ.

**9) ຜົນກະທົບຕໍ່ກະແສເງິນສົດ** ໃຫ້ພິຈາລະນາຈາກການຫຼຸດລົງຂອງກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດ ຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ກະແສເງິນສົດ = [(ກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດປີດຳເນີນການສືບສວນ - ກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດປີຜ່ານມາ) ÷ (ກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດປີຜ່ານມາ)] x 100**

ວິທີຄິດໄລ່ ກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດ ມີດັ່ງນີ້:

**ກະແສເງິນສົດລວມຈາກການເຄື່ອນໄຫວທຸລະກິດ = ຜົນກຳໄລ + ຄ່າເສື່ອມລາຄາ + ຄ່າປ່ຽນແປງຂອງເງິນທຶນໝູນວຽນ**

ວິທີຄິດໄລ່ເງິນໝູນທຶນວຽນ ມີດັ່ງນີ້:

**ເງິນທຶນໝູນວຽນ = ຊັບສິນໝູນວຽນ - ໜີ້ສິນໝູນວຽນ**

**ຄ່າປ່ຽນແປງເງິນທຶນໝູນວຽນ = ເງິນທຶນໝູນວຽນປີປະຈຸບັນ - ເງິນທຶນໝູນວຽນປີຜ່ານມາ**

ສຳລັບຄ່າເສື່ອມລາຄາ ໝາຍເຖິງ ຄ່າໃຊ້ຈ່າຍທີ່ຫັກຈາກມູນຄ່າຂອງຊັບສິນຄົງທີ່ ທີ່ໃຊ້ເຂົ້າໃນການເຄື່ອນໄຫວທຸລະກິດຂອງຜູ້ຜະລິດສິນຄ້າພາຍໃນ ເຊັ່ນ ຕຶກ, ອຸປະກອນ, ເຄື່ອງຈັກ ຊຶ່ງເປັນຊັບສິນທີ່ມີມູນຄ່າສູງ ແລະ ອາຍຸການນຳໃຊ້ຍາວນານ.

**10) ຜົນກະທົບຕໍ່ສິນຄ້າໃນສາງ** ໃຫ້ພິຈາລະນາຈາກການເພີ່ມຂຶ້ນຂອງປະລິມານສິນຄ້າທີ່ຄ້າຍຄືກັນໃນສາງຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ສິນຄ້າໃນສາງ = [(ປະລິມານສິນຄ້າໃນສາງຂອງປີທີ່ດຳເນີນການສືບສວນ - ປະລິມານສິນຄ້າໃນສາງຂອງປີຜ່ານມາ) ÷ (ປະລິມານສິນຄ້າໃນສາງຂອງປີຜ່ານມາ)] x 100**

ວິທີຄິດໄລ່ປະລິມານສິນຄ້າໃນສາງ ມີດັ່ງນີ້:

**ສິນຄ້າໃນສາງ = ປະລິມານສິນຄ້າທີ່ຜະລິດໄດ້ - ປະລິມານການຈຳໜ່າຍສິນຄ້າ**

**11) ຜົນກະທົບຕໍ່ການຈ້າງງານ** ໃຫ້ພິຈາລະນາຈາກການຫຼຸດລົງຂອງຄ່າຈ້າງແຮງງານໃນການຜະລິດ ແລະ ແຮງງານທີ່ໃຊ້ເຂົ້າໃນວຽກງານບໍລິຫານ ຂອງສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນ ເນື່ອງຈາກຜູ້ຜະລິດສິນຄ້າພາຍໃນ ພະຍາຍາມຫຼຸດຕົ້ນທຶນການຜະລິດ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ການຈ້າງງານ = [(ຄ່າຈ້າງແຮງງານຂອງປີທີ່ດຳເນີນການສືບສວນ - ຄ່າຈ້າງແຮງງານຂອງປີຜ່ານມາ) ÷ (ຄ່າຈ້າງແຮງງານຂອງປີຜ່ານມາ)] x 100**

ວິທີຄິດໄລ່ປະລິມານການຈ້າງງານ ມີດັ່ງນີ້:

**ຄ່າຈ້າງແຮງງານ = ແຮງງານການຜະລິດ + ແຮງງານບໍລິຫານ**

**12) ຜົນກະທົບຕໍ່ຄ່າຈ້າງແຮງງານ** ໃຫ້ພິຈາລະນາຈາກການຫຼຸດລົງຂອງຄ່າຈ້າງແຮງງານໃນການຜະລິດ ແລະ ບໍລິຫານ ສິນຄ້າທີ່ຄ້າຍຄືກັນ ຂອງຜູ້ຜະລິດສິນຄ້າພາຍໃນ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ຄ່າຈ້າງແຮງງານ = [(ຄ່າຈ້າງແຮງງານຂອງປີທີ່ດໍາເນີນການສືບສວນ - ຄ່າຈ້າງແຮງງານປີຜ່ານມາ) ÷ (ຄ່າຈ້າງແຮງງານຂອງປີຜ່ານມາ)] x 100**

ວິທີຄິດໄລ່ປະລິມານການຈ້າງງານ ມີດັ່ງນີ້:

**ຄ່າຈ້າງແຮງງານ = ຄ່າແຮງງານຕໍ່ມື້ໃນການຜະລິດ ຫຼື ບໍລິການ x ຈໍານວນມື້ເຮັດວຽກ**

13) **ຜົນກະທົບຕໍ່ອັດຕາການເຕີບໂຕຂອງທຸລະກິດ** ໃຫ້ພິຈາລະນາຈາກການຫຼຸດລົງຂອງລາຍຮັບຈາກການດໍາເນີນທຸລະກິດ ເນື່ອງຈາກຜູ້ຜະລິດສິນຄ້າພາຍໃນ ບໍ່ສາມາດເພີ່ມປະລິມານການຈໍາໜ່າຍໃນອັດຕາສ່ວນດຽວກັນກັບການເພີ່ມຂຶ້ນຂອງປະລິມານການຊົມໃຊ້ພາຍໃນ ເນື່ອງຈາກມີການເພີ່ມຂຶ້ນຂອງປະລິມານສິນຄ້າ ທີ່ມີການທຸ່ມຕະຫຼາດ ຫຼື ໄດ້ຮັບການຊ່ວຍໜູນຂອງປະເທດຜູ້ສົ່ງອອກ ຊຶ່ງມີສູດຄິດໄລ່ ດັ່ງນີ້:

**ຜົນກະທົບຕໍ່ອັດຕາການເຕີບໂຕ = [(ລາຍຮັບຂອງປີທີ່ດໍາເນີນການສືບສວນ - ລາຍຮັບຂອງປີຜ່ານມາ) ÷ (ລາຍຮັບຂອງປີຜ່ານມາ)] x 100**

14) **ຜົນກະທົບຕໍ່ຄວາມສາມາດໃນການເພີ່ມທຶນ ຫຼື ການລົງທຶນ** ໃຫ້ພິຈາລະນາຈາກງົບການເງິນ ຖ້າເຫັນວ່າຜູ້ຜະລິດສິນຄ້າພາຍໃນຂາດທຶນສະສົມຢ່າງຕໍ່ເນື່ອງ ຊຶ່ງເປັນອຸປະສັກໃນການເພີ່ມທຶນ ຫຼື ການລົງທຶນ.

**ຜົນກະທົບຕໍ່ຄວາມສາມາດໃນການເພີ່ມທຶນ ຫຼື ການລົງທຶນ = [(ຜົນການຂາດທຶນຂອງປີທີ່ດໍາເນີນການສືບສວນ - ຜົນການຂາດທຶນຂອງປີຜ່ານມາ) ÷ (ຜົນການຂາດທຶນຂອງປີຜ່ານມາ)] x 100**

ວິທີຄິດໄລ່ຜົນການຂາດທຶນ ມີດັ່ງນີ້:

**ຜົນການຂາດທຶນ = [(ຕົ້ນທຶນການຜະລິດ + ລາຍຈ່າຍບໍລິຫານ) - (ມູນຄ່າການຈໍາໜ່າຍສິນຄ້າ)]**

## IV. ການຈັດຕັ້ງປະຕິບັດ

ມອບໃຫ້ ກົມນະໂຍບາຍການຄ້າຕ່າງປະເທດ, ກະຊວງອຸດສາຫະກໍາ ແລະ ການຄ້າ ເປັນເຈົ້າການໃນການປະສານສົມທົບກັບພາກສ່ວນກ່ຽວຂ້ອງໃນການຈັດຕັ້ງປະຕິບັດຄໍາແນະນໍາສະບັບນີ້ໃຫ້ມີປະສິດທິຜົນສູງ.

ຄໍາແນະນໍາສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການສິບຫ້າ ວັນ.໗

**ລັດຖະມົນຕີ**

ນ ເຂັມມະນີ ພົນເສນາ